ນະຄອນຫຼວງວຽງຈັນ, ວັນທີ 28/04/2016

# ມະຕິ
## ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2015
## ຄັ້ງວັນທີ 28/04/2016

ກອງປະຊຸມສາມັນຜູ້ຖືຮຸ້ນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ 2015 (ຕໍ່ໄປນີ້ຮຽກວ່າ: ກອງປະຊຸມ) ໄດ້ໄຂຂຶ້ນໃນເວລາ 14:10 ໂມງ ຂອງວັນທີ 28/04/2016 ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8 ສຳນັກງານຕະຫຼາດຫຼັກຊັບລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 72 ທ່ານ, ລວມຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີທັງໝົດເທົ່າກັບ 114,136,127 ຮຸ້ນ, ບັນລຸອັດຕາສ່ວນ 83.57% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ຊຶ່ງຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 22,441,473 ຮຸ້ນ ເທົ່າກັບ 16.43%ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

**ກອງປະຊຸມ ໄດ້ຄົ້ນຄວ້າ ແລະ ມີມະຕິໃນບາງບັນຫາທີ່ສຳຄັນ ດັ່ງລຸ່ມນີ້:**

1. ກອງປະຊຸມໄດ້ ຮັບຊາບຕໍ່ການລາຍງານເນື້ອໃນສຳຄັນຂອງມະຕິກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ ແລະ ການຈັດຕັ້ງປະຕິບັດ.
2. ກອງປະຊຸມໄດ້ ຮັບຊາບຕໍ່ການລາຍງານຫຍໍ້ສະພາບການດຳເນີນງານຂອງ ທຄຕລ ໃນປີ 2015.
3. ກອງປະຊຸມເຫັນດີຮັບຮອງຜົນການດຳເນີນທຸລະກິດທີ່ຖືກກວດສອບຈາກຜູ້ກວດສອບພາຍນອກແລ້ວ, ການແບ່ງປັນກຳໄລຫຼັງອາກອນເຂົ້າຄັງຕ່າງໆ ແລະ ເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ສຳລັບປີ 2015:
   - ຜົນການດຳເນີນທຸລະກິດ ປະຈຳປີ 2015 ທີ່ໄດ້ຮັບການກວດສອບຈາກ ຜູ້ກວດສອບບັນຊີພາຍນອກ ແລະ ໄດ້ຮັບການຮັບຮອງຈາກສະພາບໍລິຫານ: ກຳໄລກ່ອນອາກອນຂອງ ທຄຕລ ເທົ່າກັບ 128.8 ຕື້ກີບ ກຳໄລຫຼັງຫັກອາກອນກຳໄລ ເທົ່າກັບ 105.2 ຕື້ກີບ.
   - ສະເໜີຈ່າຍເງິນປັນຜົນປະຈຳປີ 2015 ໃຫ້ຜູ້ຖືຮຸ້ນເປັນຈຳນວນເງິນທັງໝົດ 53.5 ຕື້ກີບ ຊຶ່ງຕົວເລກນີ້ແມ່ນໄດ້ຫັກອາກອນກຳໄລໃນທຸລະກິດ, ສ້າງຄັງຕ່າງໆຕາມລະບຽບການແລ້ວ ແລະ ເທົ່າກັບຮຸ້ນລະ 392 ກີບ. ໃນນີ້ ທຄຕລ ໄດ້ປັນຜົນງວດທີ່ 1 ໂດຍອີງຕາມຜົນການດຳເນີນງານ 6 ເດືອນຕົ້ນປີ 2015 (ຈ່າຍໃນເດືອນ 10/2015) ໄປແລ້ວຈຳນວນ 173 ກີບຕໍ່ຮຸ້ນ ສະນັ້ນ, ເງິນປັນຜົນງວດ 2 ນີ້ຈະແມ່ນ 219 ກີບຕໍ່ຮຸ້ນ.
   - ການຈ່າຍເງິນປັນຜົນຈະໄດ້ປະຕິບັດໃຫ້ສຳເລັດຢູ່ພາຍໃນ 5 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

➢ ຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີ: 114,136,127 ສຽງ ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ: 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.



Head Office: No.1 Pangkham Street Vientiane, Lao PDR. P.O.Box 2925 Tel: (856-21) 213200-1, 222495, 217904, 217898-9
Fax: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhgv@bcel.com.la, SWIFT Code: COEBLALA

4. ກອງປະຊຸມໄດ້ຮັບຮອງເອົາແຜນການທຸລະກິດ, ແຜນຮັບພະນັກງານ ແລະ ແຜນການຂະຫຍາຍຕາໜ່າງບໍລິການ ປະຈຳປີ 2016 ດັ່ງນີ້:
    - ຍອດຊັບສິນ/ໜີ້ສິນ: 27,580 ຕື້ກີບ, ເພີ່ມຂຶ້ນ 6.6% ເມື່ອທຽບໃສ່ຕົວເລກປີ 2015
    - ຍອດເງິນຝາກ: 25,000 ຕື້ກີບ, ເພີ່ມຂຶ້ນ 6.4% ເມື່ອທຽບໃສ່ຕົວເລກປີ 2015
    - ຍອດເງິນກູ້: 14,025 ຕື້ກີບ, ເພີ່ມຂຶ້ນ 27.5% ເມື່ອທຽບໃສ່ຕົວເລກປີ 2015
    - ກຳໄລກ່ອນອາກອນ 157 ຕື້ກີບ ຫຼື ເພີ່ມຂຶ້ນ 30.7% ເມື່ອທຽບໃສ່ຜົນກຳໄລ 2015
    - ຮັບພະນັກງານໃໝ່ເພື່ອປະກອບໃຫ້ ທຄຕລ ໃນທົ່ວລະບົບຈຳນວນ 90 ຄົນ
    - ແຜນການຂະຫຍາຍຕາໜ່າງບໍລິການເພີ່ມ 8 ຈຸດ.

   ➢ ຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:
    - ເຫັນດີ: 114,136,127 ສຽງ ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
    - ບໍ່ເຫັນດີ: 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

5. ກອງປະຊຸມຮັບຮອງເອົາການແບ່ງເງິນປັນຜົນຜູ້ຖືຮຸ້ນໃນປີ 2016 ເປັນ 1 ງວດ ໂດຍອີງຕາມຜົນກວດສອບປະຈຳປີຈາກຜູ້ກວດສອບພາຍນອກ.

   ➢ ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:
    - ເຫັນດີ: 114,136,127 ສຽງ ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
    - ບໍ່ເຫັນດີ: 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

6. ກອງປະຊຸມໄດ້ຮັບຮອງເອົາ ບໍລິສັດ ເອິນສແອນຢັງລາວ ຈຳກັດ ເປັນຜູ້ກວດສອບ ທຄຕລ ປີ 2016, ໃນນັ້ນລວມມີການກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວ, ພາສາອັງກິດ, ກຳນົດອອກບົດລາຍງານສຳຫຼັບ 6 ເດືອນຕົ້ນປີ ແລະ ທ້າຍປີ 2016.

   ➢ ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:
    - ເຫັນດີ: 114,136,127 ສຽງ ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
    - ບໍ່ເຫັນດີ: 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ..

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ**

**ດຣ. ບຸນເຫຼືອ ສິນໄຊວໍຣະວົງ**